S D
C S

# SAN DIEGO CITY SCHOOLS

EUGENE BRUCKER EDUCATION CENTER
4100 Normal Street, San Diego, CA 92103-2682

Phone: (619) 725-5578
Fax: (619) 725-5576

Communications Department

# ຄຳຕອບແລະຄຳຖາມທີ່ນັກຮຽນຖາມເລື້ອຍໆກ່ຽວກັບ ການສັ່ງຢຸດຊົ່ວຄາວ ແລະ ການໄລ່ອອກໂຮງຮຽນ

## ໂຮງຮຽນສາມາດຊ່ອຍໃຫ້ຂ້ອຍສຳເຣັດບົດຮຽນໄດ້ແນວໃດ ເວລາຂ້ອຍຖືກສັ່ງຢຸດຊົ່ວຄາວ?

ພໍ່ແມ່ຂອງເດັກທີ່ຖືກສັ່ງຢຸດໂຮງຮຽນຊົ່ວຄາວ ອາດສາມາດຂໍຮ້ອງເອົາບົດຮຽນ ແລະການສອບເສັງໃຫ້ເດັກລະຍະທີ່ຖືກສັ່ງຢຸດຢູ່ບ້ານ. ນອກນັ້ນ, ຄຣູປະຈຳຫ້ອງອາດຈະຮຽກຮ້ອງໃຫ້ນັກຮຽນຜູ້ນັ້ນສຳເຣັດບົດຮຽນ ແລະຂໍ້ສອບເສັງຕ່າງໆໃນລະຍະເວລາທີ່ຖືກສັ່ງຢຸດນັ້ນ. ພວກນັກຮຽນຄວນກວດເບິ່ງໂຄງການບຳຣຸງຕ່າງໆກັບຄຣູແນະນຳ. ລາຍລະລາຍເພີ້ມນັ້ນ, ສາມາດກວດເບິ່ງໃນກົດລະບຽບສູນກາງສຶກສາ ເລກທີ #6290, ຊຶ່ງມີໄວ້ຢູ່ໃນຕາໜ່າງຂ່າວສູນກາງສຶກສາທີ່ http://prod031.sandi.net/procedures/pdf/pp6290.pdf.

## ການ "ຈູ່ໂຈມທຳລາຍ" ("assult") ນີ້ແປວ່າແນວໃດ?

ການ "ຈູ່ໂຈມທຳລາຍ" ມີຄວາມໝາຍວ່າ, "ການພຍາຍາມທຳຜິດກົດໝາຍ, ບາງຢ່າງທີ່ຖືເປັນການກະທຳ, ການທຳບາດເຈັບຮ້າຍແຮງແກ່ຄົນອື່ນ." ນະໂຍບາຍການຮັກສາລະບຽບວິນັຍຂອງສູນກາງສຶກສານັ້ນ, ການ "ຈູ່ໂຈມທຳລາຍ ແລະ ການທຸບຕີຮ່າງກາຍ" ທີ່ຜິດກົດໝາຍ" ຣວມທັງປະເພດກໍ່ເຫດ, ພຍາຍາມກໍ່ເຫດ, ຫລື ຂູ່ຈະເຮັດໃຫ້ຮ່າງກາຍບາດເຈັບ; ໃຊ້ເຣື່ອແຮງ ແລະ ຄວາມຣຸນແຮງ ກັບຄົນອື່ນ, ແລະ ການຈູ່ໂຈມທຳຮ້າຍ ແລະ ທຸບຕີເພື່ອການເພດ, ນອກຈາກເປັນການປ້ອງກັນຕົວເທົ່ານັ້ນ.

## ວິທີດຳເນີນງານເພື່ອອຸທອນການສັ່ງຢຸດຊົ່ວຄາວນັ້ນແມ່ນຫຍັງ?

ການອຸທອນ ຂອງການສັ່ງຢຸດຊົ່ວຄາວນີ້, ພໍ່ແມ່ ຫລື ຜູ້ປົກຄອງນັກຮຽນຕ້ອງໄດ້ຂຽນປະກອບໃບອຸທອນການຖືກສັ່ງຢຸດຊົ່ວຄາວ. ຫ້ອງການສັບຊ້ອນ ແລະ ອຸທອນຈະຕ້ອງໄດ້ຮັບໃບຂໍອຸທອນ ແລະ ໃບສຳເນົາສັ່ງຢຸດຊົ່ວຄາວຈາກໂຮງຮຽນຂອງເດັກພາຍໃນ 15 ວັນ ຂອງວັນເຂົ້າເຂົ້າໂຮງຮຽນ ນັບແຕ່ມື້ທຳອິດຂອງວັນສັ່ງຢຸດຊົ່ວຄາວໄປ. ທ່ານສາມາດຕິດຕໍ່ໄປຫາຫ້ອງການສັບຊ້ອນ ແລະ ອຸທອນ (619) 725-5660 ແລະ ຂໍໃຫ້ສົ່ງໃບຄຳຮ້ອງນັ້ນມາທາງໄປສະນີ, ຫລື ທ່ານສາມາດພິມເອົາໄດ້ຈາກຕາໜ່າງຂ່າວສູນກາງສຶກສາ ທີ່: http://www.sandi.net/depts/placement_appeal/suspension_appeal.pdf.

## ວິທີດຳເນີນງານເພື່ອອຸທອນການໄລ່ອອກໂຮງຮຽນນັ້ນແມ່ນຫຍັງ?

ໃນກໍຣະນີຖືກໄລ່ອອກໂຮງຮຽນ, ຫລັງຈາກສະພາສຶກສາໄດ້ຕັດສິນ ແລະ ໄລ່ນັກຮຽນອອກໂຮງຮຽນນັ້ນ, ຫ້ອງການສັບຊ້ອນ ແລະ ອຸທອນຈະໃຫ້ລາຍລະອຽດຕ່າງໆກ່ຽວກັບການຕິດຕໍ່ກັບຫ້ອງການສຶກສາເຂດແຄວ້ນເມືອງແຊນດີເອໂກ, ຊຶ່ງມີໜ້າທີ່ສຳເພາະດ້ານຂໍອຸທອນການໄລ່ອອກໂຮງຮຽນ.

ໃນການຂໍອຸທອນນັ້ນ ພໍ່ແມ່ມີເວລາ 30 ວັນ ຫລັງຈາກສະພາສູນກາງສຶກສາມີຄຳສັ່ງໄລ່ເດັກອອກໂຮງຮຽນ. ການຕັດສິນສັ່ງຢຸດການໄລ່ອອກໂຮງຮຽນຂອງສະພາການສຶກສານັ້ນ ຈະບໍ່ກ່ຽວຂ້ອງກັນກັບຊ່ວງເວລາ ແລະ ການຮຽກຮ້ອງຢື່ນຂໍອຸທອນນັ້ນ. ທ່ານສາມາດຕິດຕໍ່ໄປຫາຫ້ອງການສຶກສາຂອງເຂດແຄວ້ນເມືອງແຊນດີເອໂກທີ່ (858) 292-3500, ຫລື ຕິດຕໍ່ໄປທີ່ 6401 Linda Vista Rd., San Diego, CA 92111. ປື້ມແນະນຳກ່ຽວກັບຂໍອຸທອນການຖືກໄລ່ອອກໂຮງຮຽນນັ້ນ ມີໄວ້ທີ່ຕາໜ່າງຂ່າວ http://www.sdcoe.k12.ca.us/expulsion/expulsion1.html.

## "ຄວາມຫຍາບຄາຍ" ("defiance") ນີ້ແປວ່າແນວໃດ?

ຄວາມຫຍາບຄາຍໝາຍຄວາມວ່າ "ຄວາມຕັ້ງໃຈຝ່າຝືນທ້າທາຍເຈົ້າໜ້າທີ່ປົກຄອງໂຮງຮຽນ", ຣວມທັງຫົວໜ້າດູແລກຳກັບ, ນາຍຄຣູ, ພະນັກງານໂຮງຮຽນ ແລະ ພະນັກງານອື່ນໆຂອງໂຮງຮຽນທີ່ກຳລັງເຮັດໜ້າທີ່ວຽກງານຂອງເຂົາເຈົ້າຢູ່ນັ້ນ. ອັນນີ້ຣວມທັງການຂັດຂວາງທ້າທາຍນາຍຄຣູ ຫລື ລະເມີດລະບຽບວິນັຍຂອງຫ້ອງຮຽນ.

## ຂ້ອຍຈະເຮັດແນວໃດ ເມື່ອຂ້ອຍຮູ້ສຶກວ່າເຈົ້າໜ້າທີ່ໂຮງຮຽນບໍ່ມີຄວາມຍຸຕິທັມກັບຂ້ອຍ?

ການຕຳນິຟ້ອງຮ້ອງພະນັກງານນັ້ນຕ້ອງໄດ້ນຳຂຶ້ນໄປຫາຫົວໜ້າໝວດໂຮງຮຽນ. ຖ້າວ່າບັນຫາບໍ່ສາມາດແກ້ໄຂໄດ້ໃນຂັ້ນໂຮງຮຽນ, ຕ້ອງທຳການຟ້ອງຮ້ອງເປັນທາງການ ກັບຫ້ອງການສະພາບໍຣິການ ແລະ ການຊ່ວຍເຫລືອພໍ່ແມ່. ສາມາດຕິດຕໍ່ໄປຫາຫ້ອງການໄດ້ທີ່ (619) 725-5525 ຫລື ໄປຫາສູນກາງສຶກສາ ທີ່ຫ້ອງ Room 2153 Eugene Brucker Education Center, 4100 Normal Street, San Diego, CA 92103. ທ່ານຍັງສາມາດຮຽນຮູ້ເພີ້ມເຕີມທີ່ຕາໜ່າງຂ່າວຂອງຫ້ອງການ http://www.sandi.net/parents/support/support.html.

*(ມີຕໍ່ດ້ານຫລັງ)*

---

*"ໜ້າທີ່ຂອງໂຮງຮຽນເຂດແຊນດີເອໂກ ແມ່ນເພື່ອປັບປຸງໃຫ້ນັກຮຽນມີຄວາມສຳເຣັດ ໂດຍການຊ່ວຍເຫລືອ ດ້ານການສິດສອນ ແລະ ດ້ານການຮໍ່າຮຽນຢູ່ໃນຫ້ອງຮຽນ."*

# ຄຳຕອບແລະຄຳຖາມທີ່ນັກຮຽນຖາມເລື້ອຍໆກ່ຽວກັບ ການສັ່ງຢຸດຊົ່ວຄາວ ແລະ ການໄລ່ອອກໂຮງຮຽນ

*(ຕໍ່)*

## ຂ້ອຍຈະເຮັດແນວໃດ ເມື່ອຮູ້ສຶກວ່າຂ້ອຍຜິດຕໍ່ການສັ່ງຢຸດຊົ່ວຄາວຢ່າງຮ້າຍແຮງ?

ຖ້ານັກຮຽນຮູ້ສຶກວ່າຜິດຕໍ່ລະບຽບການສັ່ງຢຸດຊົ່ວຄາວຮ້າຍແຮງນັ້ນ, ເຂົາເຈົ້າຕ້ອງໄດ້ປະຕິບັດຕາມລະບຽບນັ້ນ, ແຕ່ກໍສາມາດຂໍອຸທອນຕໍ່ການສັ່ງຢຸດຊົ່ວຄາວນັ້ນ, ຖ້າອຸທອນໄດ້, ຈະມີຜົນລົບລ້າງການສັ່ງຢຸດຊົ່ວຄາວອອກຈາກປຶ້ມບັນທຶກຂອງເຂົາເຈົ້າ. ບັນຊີກວດເບິ່ງການອຸທອນຂອງການສັ່ງຢຸດຊົ່ວຄາວນັ້ນມີໄວ້ໃຫ້ໂດຍໂທຣະສັບຫາຫ້ອງການສັບຊ້ອນ ແລະ ອຸທອນ (619) 725–5660, ຫລື ສາມາດພິມເອົາໄດ້ທີ່ http://www.sandi.net/depts/placement_appeal/suspension_appeal.pdf.

## ຖ້າຖືກສັ່ງຢຸດຊົ່ວຄາວ, ຂ້ອຍສາມາດກັບໄປໂຮງຮຽນບໍ? ຖ້າກັບໄປຈະເປັນແນວໃດ?

ໃນລະຍະການສັ່ງຢຸດຊົ່ວຄາວເປັນທາງການ, ການສັ່ງຢຸດຊົ່ວຄາວນອກ–ໂຮງຮຽນນັ້ນ, ນັກຮຽນບໍ່ອະນຸຍາດໃຫ້ເຂົ້າໄປໃນເຂດໂຮງຮຽນໃດໆໃນສູນການສຶກສາໃນລະຍະເວລາການສັ່ງຢຸດຊົ່ວຄາວ ນອກຈາກມີການປະຊຸມເປັນທາງການທີ່ກ່ຽວຂ້ອງກັບການສັ່ງຢຸດຊົ່ວຄາວຂອງເຂົາເຈົ້າ. ຖ້ານັກຮຽນເຂົ້າໄປໃນເຂດໂຮງຮຽນນັ້ນ, ທາງໂຮງຮຽນສາມາດໂທຣະສັບຫາຕຳຣວດໂຮງຮຽນ ແລະ ພໍ່ແມ່ນັກຮຽນເພື່ອເອົານັກຮຽນອອກຈາກໂຮງຮຽນ.

## ນາຍຄຣູຈະສາມາດບັງຄັບໃຫ້ພໍ່ແມ່ຂອງຂ້ອຍເຂົ້າມາປະຊຸມກ່ຽວກັບການສັ່ງຢຸດຊົ່ວຄາວໃນໂຮງຮຽນບໍ?

ມີການແນະນຳຢ່າງແຂງແຮງໃຫ້ພໍ່ແມ່ມາສັງເກດເບິ່ງເດັກຂອງເຂົາເຈົ້າ ຫລື ມາປະຊຸມຢູ່ໂຮງຮຽນ, ແຕ່ບໍ່ມີໃຜສາມາດບັງຄັບພໍ່ແມ່ໄດ້. ນັກຮຽນບໍ່ສາມາດປະຕິເສດ ຫລື ເລື່ອນການກັບເຂົ້າຮຽນຂອງການສັ່ງຢຸດຊົ່ວຄາວ ຫລື ການລົງໂທດອື່ນໆຍ້ອນພໍ່ແມ່ບໍ່ໄດ້ຕິດຕໍ່ໄປຫາໂຮງຮຽນ.

## ວິທີອຸທອນການສັ່ງຢຸດຊົ່ວຄາວນັ້ນແມ່ນຫຍັງ?

ເພື່ອອຸທອນການສັ່ງຢຸດຊົ່ວຄາວນັ້ນ, ພໍ່ແມ່ຂອງນັກຮຽນ ຫລື ຜູ້ປົກຄອງນັກຮຽນຕ້ອງຂຽນປະກອບໜັງສືອຸທອນການສັ່ງຢຸດຊົ່ວຄາວ. ຫ້ອງການສັບຊ້ອນ ແລະ ອຸທອນ ຕ້ອງໄດ້ຮັບໜັງສືປະກອບທີ່ສົມບູນແລ້ວ ແລະ ສຳເນົາໃບສັ່ງຢຸດຊົ່ວຄາວຈາກໂຮງຮຽນຂອງເດັກນຶ່ງໃບ ພາຍໃນສິບຫ້າ (15) ວັນ, ນັບແຕ່ວັນສັ່ງຢຸດຊົ່ວຄາວໄປ. ເພື່ອຮ້ອງຂໍເອົາໜັງສືນີ້ທາງໄປສະນີ, ທ່ານສາມາດຕິດຕໍ່ຫາຫ້ອງການສັບຊ້ອນ ແລະ ອຸທອນ ທີ່ (619) 725–5660, ຫລື ສາມາດພິມເອົາໄດ້ທີ່ http://www.sandi.net/depts/placement_appeal/suspension_appeal.pdf.

## ວິທີອຸທອນການໄລ່ອອກໂຮງຮຽນນັ້ນແມ່ນຫຍັງ?

ໃນກໍຣະນີຖືກໄລ່ອອກໂຮງຮຽນນັ້ນ, ຫລັງຈາກສະພາສຶກສາໄດ້ຕັດສິນ ແລະ ໄລ່ນັກຮຽນອອກໂຮງຮຽນນັ້ນ, ຫ້ອງການສັບຊ້ອນ ແລະ ອຸທອນຈະໃຫ້ລາຍລະອຽດຕ່າງໆແກ່ພໍ່ແມ່/ຜູ້ປົກຄອງນັກຮຽນ ກ່ຽວກັບການຕິດຕໍ່ ຫ້ອງການສຶກສາເຂດແຄວ້ນເມືອງແຊນດິເອໂກ, ຊຶ່ງມີໜ້າທີ່ສຳເພາະດ້ານຂໍອຸທອນຂອງການໄລ່ອອກໂຮງຮຽນ. ພໍ່ແມ່ມີເວລາຍື່ນໜັງສືອຸທອນ 30 ວັນ ຫລັງຈາກສະພາສູນກາງສຶກສາອອກຄຳສັ່ງໄລ່ເດັກອອກໂຮງຮຽນ. ການຕັດສິນສັ່ງຢຸດການໄລ່ອອກໂຮງຮຽນຂອງສະພາສຶກສານັ້ນ ຈະບໍ່ສະທ້ອນກັບຊ່ວງເວລາ ແລະ ການຮຽກຮ້ອງຍື່ນໜັງສືອຸທອນ. ທ່ານສາມາດຕິດຕໍ່ຫາຫ້ອງການສຶກສາເຂດແຄວ້ນເມືອງແຊນດິເອໂກທີ່ (858) 292–3500, ຫລື ຕິດຕໍ່ໄປທີ່ 6401 Linda Vista Rd., San Diego, CA 92111. ປຶ້ມແນະນຳກ່ຽວກັບການຂໍອຸທອນທີ່ການຖືກໄລ່ອອກໂຮງຮຽນນັ້ນ ມີໄວ້ທີ່ຕາໜ່າງຂ່າວ http://www.sdcoe.k12.ca.us/expulsion/expulsion1.html.

## ຫລັງຈາກຖືກໄລ່ອອກໂຮງຮຽນແລ້ວ ຂ້ອຍຈະກັບເຂົ້າໂຮງຮຽນໄດ້ແນວໃດ?

ຂຶ້ນກັບກໍຣະນີການໄລ່ອອກໂຮງຮຽນນັ້ນ, ສະພາສູນກາງສຶກສາສາມາດຈັດໂຮງຮຽນ, ຫ້ອງຮຽນ ຫລື ໂຄງການຮຽນໃຫ້ແກ່ນັກຮຽນ, ອີງຕາມກົດໝາຍ, ທີ່ຖືວ່າເໝາະສົມ, ແລະ ພ້ອມທັງສະພາສູນກາງກໍໄດ້ແນະນຳໃຫ້ມີແຜນການຟື້ນຕົວສຳຫລັບນັກຮຽນ. ແຜນຟື້ນຕົວນີ້ອາດຣວມມີທັງການທົບທວນ ແລະ ການອົບຮົມເປັນລະຍະໆໄປ. ເມື່ອປະຕິບັດສຳເຣັດຕາມແຜນການຟື້ນຕົວແລ້ວ, ຫ້ອງການສັບຊ້ອນ ແລະ ອຸທອນຂອງສູນກາງສຶກສາກໍຈະໄດ້ສັບຊ້ອນໃສ່ບ່ອນເໝາະສົມເພື່ອໃຫ້ນັກຮຽນກັບເຂົ້າໂຮງຮຽນອີກ. ຖ້າປະຕິບັດແຜນຟື້ນຕົວບໍ່ສຳເຣັດນັ້ນ, ສະພາສູນກາງສຶກສາອາດຈະປະຕິເສດ ໃຫ້ກັບເຂົ້າໂຮງຮຽນໃນໂຄງການຮຽນທັມດາຂອງໂຮງຮຽນສູນກາງສຶກສາ ແລະ ຈະຈັດສົ່ງນັກຮຽນໄປໂຮງຮຽນສານເຍົາວະຊົນຈົນກວ່ານັກຮຽນປະຕິບັດແຜນຟື້ນຕົວໄດ້ສຳເຣັດ ແລ້ວນັກຮຽນຈຶ່ງຈະໄດ້ກັບເຂົ້າມາຮຽນໃນໂຮງຮຽນທັມດາອີກ.

## ການຖືກໄລ່ອອກໂຮງຮຽນ ຈະເປັນເວລາດົນປານໃດ?

ຂຶ້ນກັບກໍຣະນີຂອງຄວາມຜິດ, ຄຳສັ່ງການໄລ່ອອກໂຮງຮຽນນັ້ນຈະບໍ່ຍາວກວ່ານຶ່ງປີ ນັບແຕ່ວັນໄລ່ອອກໂຮງຮຽນໄປ. ອັນນີ້ບໍ່ຈຳເປັນຕ້ອງນັບແຕ່ວັນຂອງການກະທຳຜິດ, ຊຶ່ງອາດຈະໄວກວ່ານີ້ຫລາຍ. ການກັບເຂົ້າໃໝ່ນີ້ຈະເຣີ່ມໃນວັນເຣີ່ມຕົ້ນເທີມຮຽນໃໝ່ເທົ່ານັ້ນ.

## ຍ້ອນເຫດການແນວໃດ ສູນກາງສຶກສາຈຶ່ງສາມາດສັ່ງຢຸດຊົ່ວຄາວ ແລະ ໄລ່ນັກຮຽນພິການອອກໂຮງຮຽນ, ເມື່ອໃດຈະມີແຜນການຮຽນສ່ວນບຸກຄົນ (IEP)?

ພື້ນຖານການພິຈາຣະນາສັ່ງຢຸດຊົ່ວຄາວ ແລະ ໄລ່ອອກໂຮງຮຽນນັ້ນຄືກັນກັບພວກນັກຮຽນທຸກຄົນ, ເຖິງວ່າເຂົາເຈົ້າມີເງື່ອນໄຂເຂົ້າໃນການຊ່ວຍເຫລືອຂອງກົດໝາຍແຜນການຟື້ນຕົວ 504 ຫລື ການສຶກສາພິເສດກໍຕາມ. ຢ່າງໃດກໍດີ, ເມື່ອນັກຮຽນຜູ້ນັ້ນໄດ້ລົງທະບຽນເຂົ້າຮຽນໃນການສຶກສາພິເສດທີ່ມີເງື່ອນໄຂໃນການໄລ່ອອກ, ຫລື ການສັ່ງຢຸດຊົ່ວຄາວເກີນກວ່າ 10 ວັນນັ້ນ, ກົດໝາຍຍັງສືບຕໍ່ຮຽກຮ້ອງໃຫ້ຊ່ວຍເຫລືອແກ່ການສຶກສາສະທາຣະນະຢ່າງເໝາະສົມໂດຍບໍ່ຄິດຣາຄາ (ຟຣີ). ບໍ່ຄືກັນກັບການສຶກສາຂອງນັກຮຽນທັມດາ, ນັກຮຽນທີ່ຢູ່ໃນການສຶກສາພິເສດນັ້ນຈະບໍ່ມີການສິ້ນສຸດຂອງການຊ່ວຍເຫລືອ, ແຕ່ອາດມີການປ່ຽນແປງຂອງການສັບຊ້ອນ ເພື່ອສັບປ່ຽນການຊ່ວຍເຫລືອ ຕາມຄວາມຮຽກຮ້ອງຂອງແຜນການຮຽນສ່ວນບຸກຄົນ(IEP) ຂອງນັກຮຽນ. ສຶກສາເພີ້ມກ່ຽວກັບ ກົດໝາຍແຜນການຟື້ນຕົວ ມາດຕຣາ 504 ທີ່ http://www.hhs.gov/ocr/504.html. ລາຍລະອຽດເພີ້ມກ່ຽວກັບ ກົດໝາຍໃຫ້ການຊ່ວຍເຫລືອການສຶກສາສະທາຣະນະທີ່ເໝາະສົມໂດຍບໍ່ໄລ່ຣາຄາ (ຟຣີ) ມີໄວ້ຢູ່ໃນອິນເຕີເນດທີ່ http://www.ed.gov/about/offices/list/ocr/docs/edlite-/FAPE504.html.

*ພິມແຈກຢາຍໂດຍການຊ່ວຍເຫລືອຂອງມູນນິທິ Annie E. Casey Foundation*